ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

--------====000====-------- 0885

ກະຊວງການເງິນ ເລກທີ...... /ກງ

ນະຄອນຫລວງວຽງຈັນ, ວັນທີ 27 APR 2007

# ບົດແນະນຳ

## ວ່າດ້ວຍການຈັດຕັ້ງປະຕິບັດ ດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21/02/2005 ກ່ຽວກັບການເກັບລາຍຮັບ ແລະ ການຄຸ້ມຄອງລາຍຈ່າຍ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້

ເຖິງ: - ບັນດາກົມ ອ້ອມຂ້າງກະຊວງການເງິນ, ບັນດາພະແນກການເງິນແຂວງ ແລະ ນະຄອນຫຼວງວຽງຈັນ.

- ກົມປ່າໄມ້ ກະຊວງກະສິກຳ ແລະ ປ່າໄມ້, ບັນດາພະແນກກະສິກຳ-ປ່າໄມ້ແຂວງ ແລະ ນະຄອນຫຼວງວຽງຈັນ.

- ອີງຕາມ ກົດໝາຍວ່າດ້ວຍຊັບສິນຂອງລັດ ສະບັບເລກທີ 09/ສພຊ ລົງວັນທີ 12/10/2002.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ສະບັບເລກທີ 38/ນຍ, ລົງວັນທີ 21/02/2005 ວ່າດ້ວຍກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້.
- ອີງຕາມລະບຽບການຄຸ້ມຄອງ ແລະ ນຳໃຊ້ງົບປະມານ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ສະບັບເລກທີ 05/ກພປຊ, ລົງວັນທີ 25/07/2006.

ພາຍຫຼັງທີ່ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ (ກພປຊ) ໄດ້ຮັບການສ້າງຕັ້ງຂຶ້ນ, ການຈັດຕັ້ງປະຕິບັດວຽກງານເກັບລາຍຮັບ ແລະ ການຄຸ້ມຄອງລາຍຈ່າຍ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເຫັນວ່າມີຫຼາຍທ້ອງຖິ່ນ ໄດ້ເອົາໃຈໃສ່ໄດ້ດີສົມຄວນ ແລະ ສາມາດເກັບລາຍຮັບດັ່ງກ່າວ ໄດ້ຕາມລະດັບຄາດໝາຍຂອງແຜນການວາງອອກ. ແຕ່ຍັງມີບາງບັນຫາທີ່ຕ້ອງໄດ້ເອົາໃຈໃສ່ ແລະ ແກ້ໄຂໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ, ເປັນຕົ້ນແມ່ນການຈັດໂອນລາຍຮັບຂອງກອງທຶນ ກພປຊ ດັ່ງກ່າວ ໃຫ້ລວມສູນຢູ່ບັນຊີເງິນຝາກຂອງກອງທຶນ ກພປຊ ສູນກາງແມ່ນຍັງບໍ່ທັນເຮັດໄດ້. ຍ້ອນວ່າ, ມີຫຼາຍທ້ອງຖິ່ນໄດ້ຈົດເຂົ້າເປັນລາຍຮັບ ແລະ ລາຍຈ່າຍງົບປະມານຂອງແຂວງ ເຊິ່ງເຫັນວ່າບໍ່ສອດຄ່ອງຕາມເນື້ອໃນຈິດໃຈຂອງດຳລັດ 38/ນຍ, ລົງວັນທີ 21/02/2005 ໃນມາດຕາ 13.

ສະນັ້ນ, ເພື່ອເຮັດໃຫ້ວຽກງານການຄຸ້ມຄອງ, ການເກັບລາຍຮັບ 'ແລະ ການມອບລາຍຮັບໃຫ້ລວມສູນຢູ່ບັນຊີດຽວ ແລະ ຕອບສະໜອງງົບປະມານ ໃຫ້ທ່ວງທັນກັບການຈັດຕັ້ງປະຕິບັດວຽກງານຂອງຂະແໜງການປ່າໄມ້ ໃຫ້ບັນລຸຕາມແຜນການ ແລະ ມີປະສິດທິຜົນນັ້ນ.

ລັດຖະມົນຕີ ວ່າການກະຊວງການເງິນ ອອກບົດແນະນຳ ດັ່ງນີ້:

1. ໃຫ້ຫ້ອງການກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້, ກົມຄຸ້ມຄອງຊັບສິນຂອງລັດ, ພະແນກກະສິກຳ-ປ່າໄມ້ ແລະ ພະແນກການເງິນ ຢູ່ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ເປັນເຈົ້າການຄົ້ນຄວ້າເຊື່ອມຊຶມ ແລະ ຈັດຕັ້ງປະຕິບັດໃຫ້ຖືກຕ້ອງສອດຄ່ອງກັບເນື້ອໃນຂອງດຳລັດນາຍົກລັດຖະມົນຕີ ສະບັບເລກທີ 38/ນຍ, ລົງວັນທີ 21/02/2005 ໃຫ້ເຂົ້າໃຈຢ່າງເລິກເຊິ່ງ ແລະ ເຂັ້ມງວດ ເພື່ອໃຫ້ມີຄວາມເປັນເອກະພາບກັນໃນຂອບເຂດທົ່ວປະເທດ.

2. ລາຍຮັບຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນແຫຼ່ງລາຍຮັບທີ່ໄດ້ມາຈາກຄ່າບູລະນະປ່າໄມ້, ຄ່າພັນທະປູກປ່າ ແລະ ຄ່າສຳຫຼວດປ່າໄມ້ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 12 ຂອງດຳລັດ ສະບັບເລກທີ 38/ນຍ, ລົງວັນທີ 21/2/05.

3. ທຸກລາຍຮັບຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕາມເນື້ອໃນຂໍ້ 2 ຂອງບົດແນະນຳສະບັບນີ້ ຕ້ອງໄດ້ຈັດເຂົ້າງົບປະມານແຫ່ງລັດ, ເປັນລາຍຮັບຂອງກົມຄຸ້ມຄອງຊັບສິນຂອງລັດ (ລາຍຮັບສູນກາງ) ແລະ ຈັດຈ່າຍຜ່ານບັນຊີງົບປະມານສູນກາງ (ກົມງົບປະມານ) ເປັນລາຍຈ່າຍ ຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຂຶ້ນກັບ ກະຊວງກະສິກຳ ແລະ ປ່າໄມ້ ຕາມແຜນລາຍຈ່າຍປະຈຳປີ ທີ່ສະພາແຫ່ງຊາດໄດ້ຮັບຮອງແລ້ວນັ້ນ, ທຸກໆລາຍຮັບ-ລາຍຈ່າຍ ແມ່ນຕ້ອງໄດ້ລວມສູນຕາມລະບຽບ ແລະ ກົດໝາຍທີ່ກຳນົດໄວ້.

4. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕ້ອງໄດ້ສ້າງແຜນການນຳໃຊ້ເງິນ ຂອງກອງທຶນໃຫ້ສອດຄ່ອງກັບຍຸດທະສາດການພັດທະນາປ່າໄມ້ ແລະ ສະຫຼຸບລາຍງານ ຕາມເປົ້າໝາຍການນຳໃຊ້ເງິນຂອງກອງທຶນ ທີ່ກຳນົດໄວ້ໃນມາດຕາ 14 ຂອງດຳລັດ 38/ນຍ ລົງວັນທີ 21/02/2005 ແລະ ຕ້ອງໄດ້ສະຫຼຸບລາຍງານ ພາຍໃຕ້ການກວດກາຂອງກະຊວງການເງິນ ຕາມລະບຽບການຄຸ້ມຄອງ ລາຍຮັບ-ລາຍຈ່າຍ ແລະ ກົດໝາຍງົບປະມານແຫ່ງລັດ.

5. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ເມື່ອມີການຈັດຕັ້ງເບີກຈ່າຍໃນແຕ່ລະຄັ້ງໃນແຕ່ລະງວດແລ້ວ ຕ້ອງໄດ້ສະເໜີ ກົມຄຸ້ມຄອງຊັບສິນຂອງລັດ ແລະ ກົມງົບປະມານ ເພື່ອຈັດຮັບ-ຈັດຈ່າຍຕາມລະບຽບ ແລະ ກົດໝາຍຂອງງົບປະມານ. ການຈັດຮັບ-ຈັດຈ່າຍ ແມ່ນໃຫ້ປະຕິບັດ 4 ຄັ້ງຕໍ່ປີ (3 ເດືອນຕໍ່ຄັ້ງ) ໂດຍຖືເອົາທຸກທ້າຍເດືອນ ສຸດທ້າຍຂອງແຕ່ລະງວດຕາມສົກງົບປະມານໃນແຕ່ລະປີ, ເງິນທີ່ຄ້າງຢູ່ບັນຊີຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແມ່ນໃຫ້ສືບຕໍ່ຍົກໄປປະຕິບັດ ຈັດຮັບ-ຈັດຈ່າຍ ຕາມແຜນການອະນຸມັດງົບປະມານໃນສົກປີຕໍ່ໄປ.

6. ມອບໃຫ້ພະແນກກະສິກຳ-ປ່າໄມ້ ຢູ່ບັນດາແຂວງ ແລະ ນະຄອນຫຼວງວຽງຈັນ ເປັນຜູ້ຕິດຕາມເກັບລາຍຮັບຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນໄມ້ແລ້ວໂອນເຂົ້າບັນຊີລາຍຮັບຂອງກອງທຶນ ກພປຊ ທີ່ເປີດໄວ້ຢູ່ຄັງເງິນສູນກາງ ໃຫ້ທັນຕາມກຳນົດເວລາ ແລະ ບໍ່ອະນຸຍາດໃຫ້ຂະແໜງການ ແລະ ທ້ອງຖິ່ນໃດ ເອົາເງິນລາຍຮັບຂອງກອງທຶນໄປນຳໃຊ້.

7. ຈຳນວນເງິນສ່ວນເກີນທີ່ໄດ້ຈາກການແຂ່ງຂັນລາຄາຂາຍໄມ້ທີ່ຂຸດຄົ້ນຢູ່ເຂດປ່າຜະລິດ ຕ້ອງປະຕິບັດຕາມກົດໝາຍງົບປະມານ ເພື່ອລວມສູນລາຍຮັບທາງດ້ານການເງິນ ໂດຍຈັດຮັບ-ຈັດຈ່າຍນຳຂະແໜງການທີ່ກ່ຽວຂ້ອງ (ກົມຄຸ້ມຄອງຊັບສິນຂອງລັດ) ແລະ ໃຫ້ແບ່ງອອກເປັນ 02 ສ່ວນຄື:

+ ສ່ວນທີ 1 ມອບເຂົ້າງົບປະມານ (ເພີ່ມຄ່າຊັບພະຍາກອນທຳມະຊາດ) 30% ຂອງເງິນສ່ວນເກີນ.

+ ສ່ວນທີ 2 ແບ່ງປັນເຂົ້າກອງທຶນຕ່າງໆ 70% ຂອງເງິນສ່ວນເກີນ ເຊັ່ນ:

- 20% ເປັນກອງທຶນພັດທະນາປ່າໄມ້ ເພື່ອຕອບສະໜອງເປົ້າໝາຍ ທີ່ໄດ້ກຳນົດໄວ້ໃນມາດຕາ 47 ຂອງກົດໝາຍປ່າໄມ້.
- 25% ເປັນກອງທຶນ ສຳລັບຄຸ້ມຄອງເຂດປ່າຜະລິດ ຢູ່ໃນທ້ອງຖິ່ນ ເຊິ່ງລວມເປັນລາຍຈ່າຍຕ່າງໆ ເພື່ອຈັດຕັ້ງປະຕິບັດບັນດາກິດຈະການ ທີ່ໄດ້ກຳນົດໄວ້ໃນແຜນການດຳເນີນງານ ປະຈຳປີ.
- 25% ເປັນກອງທຶນພັດທະນາທ້ອງຖິ່ນ, ກອງທຶນດັ່ງກ່າວ ຕ້ອງໄດ້ຮັກສາໄວ້ຢູ່ທະນາຄານໃນບັນຊີຂອງບ້ານ ຫຼື ກຸ່ມບ້ານ ເພື່ອເປົ້າໝາຍການພັດທະນາ ແລະ ປັບປຸງຊີວິດການເປັນຢູ່ຂອງປະຊາຊົນ. ການນຳໃຊ້ກອງທຶນດັ່ງກ່າວ ຕ້ອງອີງໃສ່ລະບຽບຫຼັກການທາງດ້ານການເງິນ ແລະ ສອດຄ່ອງກັບແຜນການພັດທະນາ ໂດຍແມ່ນປະຊາຊົນເປັນຜູ້ສ້າງຂຶ້ນ ແລະ ຖືກຮັບຮອງຈາກຄະນະກຳມະການພັດທະນາຂອງເມືອງ ຜ່ານການສົມທົບກັບຫ້ອງການກະສິກຳ ແລະ ປ່າໄມ້ເມືອງ.

8. ກົມຄຸ້ມຄອງຊັບສິນຂອງລັດ, ກົມງົບປະມານ ແລະ ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕ້ອງເປັນເຈົ້າການຕິດຕາມກວດກາ ການປະຕິບັດລາຍຮັບ-ລາຍຈ່າຍ ຂອງກອງທຶນ (ກພປຊ) ຂັ້ນສູນກາງ ແລະ ທ້ອງຖິ່ນເປັນປະຈຳໃນແຕ່ລະປີ ແລ້ວສະຫຼຸບລາຍງານໃຫ້ຄະນະນຳກະຊວງການເງິນ, ກະຊວງກະສິກຳ-ປ່າໄມ້ ແລະ ຂັ້ນເທິງຮັບຊາບ ເພື່ອຊີ້ນຳ.

9. ກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ຕ້ອງໄດ້ປະສານສົມທົບກັບ ກົມຄຸ້ມຄອງຊັບສິນຂອງລັດ, ກົມງົບປະມານ ແລະ ກົມຄັງເງິນ ຮ່ວມກັນລົງຊຸກຍູ້ ແລະ ຈັດຕັ້ງປະຕິບັດບົດແນະນຳສະບັບນີ້ ເພື່ອໃຫ້ທ້ອງຖິ່ນ ແລະ ພາກສ່ວນທີ່ກ່ຽວຂ້ອງຕ່າງໆ ໄດ້ຮັບຮູ້ເຊື່ອມຊຶມ ໃຫ້ເປັນເອກະພາບກັນ ໃນຂອບເຂດທົ່ວປະເທດ.

10. ບົດແນະນຳສະບັບນີ້ ໃຊ້ປ່ຽນແທນບົດແນະນຳ ສະບັບເລກທີ 2333/ກງ ລົງວັນທີ 8/10/2005 ແລະ ສະບັບເລກທີ 0795/ກງ.ຊລ ລົງວັນທີ 04/04/2006 ກ່ຽວກັບການຄຸ້ມຄອງລາຍຮັບຂອງກອງທຶນພັດທະນາປ່າໄມ້ ແລະ ຊັບພະຍາກອນປ່າໄມ້ ແລະ ບົດປະກອບຄຳເຫັນຂອງກະຊວງການເງິນ ສະບັບເລກທີ 1625/ກງ ລົງວັນທີ 2/9/2003.

11. ບົດແນະນຳສະບັບນີ້ ມີຜົນສັກສິດ ແລະ ນຳໃຊ້ໄດ້ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.

ລັດຖະມົນຕີວ່າການກະຊວງການເງິນ

ຈັນສີ ໂພສີຄຳ

<u>ບ່ອນສົ່ງເອກະສານ:</u>

| | |
|---|---|
| - ຫ້ອງການ ທສນຍ | "ເພື່ອລາຍງານ" |
| - ຫ້ອງການກະຊວງ ການເງິນ | "ເພື່ອຊາບ" |
| - ກະຊວງກະສິກຳ ແລະ ປ່າໄມ້ | "ເພື່ອຊາບ" |
| - ກະຊວງອຸດສາຫະກຳ ແລະ ການຄ້າ | "ເພື່ອຊາບ" |
| - ກົມຄຸ້ມຄອງຊັບສິນຂອງລັດ | "ເພື່ອຈັດຕັ້ງປະຕິບັດ" |
| - ກົມງົບປະມານ | "ເພື່ອຈັດຕັ້ງປະຕິບັດ" |
| - ກົມຄັງເງິນ | "ເພື່ອຈັດຕັ້ງປະຕິບັດ" |
| - ກົມປ່າໄມ້ | "ເພື່ອຈັດຕັ້ງປະຕິບັດ" |
| - ກອງທຶນ ກພປຊ | "ເພື່ອຈັດຕັ້ງປະຕິບັດ" |
| - ພະແນກການເງິນແຂວງ ແລະ ນະຄອນຫຼວງ | "ເພື່ອຈັດຕັ້ງປະຕິບັດ" |
| - ພະແນກກະສິກຳ-ປ່າໄມ້ແຂວງ ແລະ ນະຄອນຫຼວງ | "ເພື່ອຈັດຕັ້ງປະຕິບັດ" |
| - ເກັບມ້ຽນ. | |